Socio Economic
Monday, March 5, 2018
Page 1 & 11

# ສື່ມວນຊົນຢ້ຽມຢາມໂຄງການພັດທະນາຍີ່ປຸ່ນຢູ່ລາວ




ອ່ານຕໍ່ໜ້າ 11

## ສື່ມວນຊົນ ...

ຂ່າວ: ວົງມະນີ

✹ ທ້າຍອາທິດຜ່ານມາ ລະຫວ່າງວັນທີ 1-2 ມີນາ 2018 ທີ່ນະຄອນຫຼວງວຽງຈັນ, ຄະນະສະຖານທູດຍີ່ປຸ່ນປະຈຳລາວ ຮ່ວມກັບອົງການໄຈກາ ແລະຄະນະສື່ມວນຊົນໄດ້ມີການທັດສະນະເດີນໄຫວຢ້ຽມຢາມ 4 ໂຄງການ ຢູ່ແຂວງວຽງຈັນ ແລະນະຄອນຫຼວງວຽງຈັນ ໃຫ້ການນຳພາທັດສະນະຢ້ຽມຢາມໂດຍທ່ານ ເກັນຕະໂລະ ນະກະຈິມະ ຮອງເລຂາທິການພະແນກຮ່ວມມືເສດຖະກິດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ ຕະຫຼອດສື່ມວນຊົນທຸກສຳນັກເຂົ້າຮ່ວມ.

ສຳລັບການຢ້ຽມຢາມທັດສະນະຄັ້ງນີ້ ໄດ້ມີການຢ້ຽມຢາມບັນດາໂຄງການຮ່ວມມືເພື່ອພັດທະນາຂອງປະເທດຍີ່ປຸ່ນທີ່ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ ເຊັ່ນ: ໂຄງການອາສາສະໝັກທີ່ໂຮງໝໍເມືອງທຸລະຄົມ ແຂວງວຽງຈັນ, ໂຄງການຂະຫຍາຍເຂື່ອນໄຟຟ້ານ້ຳງື່ມ 1, ໂຄງການຂະຫຍາຍອາຄານຜູ້ໂດຍສານສະໜາມບິນສາກົນວັດໄຕ ແລະໂຄງການເສີມຂະຫຍາຍປະສິດທິພາບຂອງລັດວິສາຫະກິດລົດເມນະຄອນຫຼວງວຽງຈັນ, ທັງນີ້ເພື່ອເປີດໂອກາດໃຫ້ຄະນະສື່ມວນຊົນພາກສ່ວນຕ່າງໆໄດ້ຮັບຮູ້ເລິກເຊິ່ງ ແລະນຳໄປໂຄສະນາເຜີຍແຜ່ກ່ຽວກັບການຮ່ວມມືເພື່ອການພັດທະນາຂອງຍີ່ປຸ່ນທີ່ມີຕໍ່ລາວ.

ທ່ານ ຄາຊຶຮິໂຣະ ຄຸໂນະ ອຸປະທູດຍີ່ປຸ່ນປະຈຳ ສປປ ລາວ ໃຫ້ຮູ້ວ່າ: ການຢ້ຽມຢາມທັດສະນະສຶກສາຂອງຄະນະສື່ມວນຊົນໃນຄັ້ງນີ້ແມ່ນຈັດຂຶ້ນຄັ້ງທຳອິດນັບແຕ່ມີການສ້າງຕັ້ງສາຍພົວພັນການທູດລະຫວ່າງຍີ່ປຸ່ນ ແລະລາວ ໃນປີ 1955 ຊຶ່ງການຊ່ວຍເຫຼືອເພື່ອການພັດທະນາຂອງຍີ່ປຸ່ນ ຫຼື ODA ແມ່ນຫົວໃຈສຳຄັນໃນສາຍພົວພັນຂອງຍີ່ປຸ່ນທີ່ມີຕໍ່ປະເທດລາວ.